ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 130/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 29 ມິນາ 2019

# ແຈ້ງການ

## ກ່ຽວກັບການເກັບຄ່າທຳນຽມມອບເງິນສົດເງິນຕາຕ່າງປະເທດປະເພດໃບນ້ອຍ ແລະ ເງິນເສື່ອມຄຸນນະພາບ ຢູ່ທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມໜັງສືສະເໜີຂອງກົມບໍລິການທະນາຄານ ສະບັບເລກທີ 907/ບກ, ລົງວັນທີ 22 ມີນາ 2019.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກແຈ້ງການ:**

ມາດຕາ 1 ທະນາຄານແຫ່ງ ສປປ ລາວ ບໍ່ເກັບຄ່າທຳນຽມມອບເງິນສົດປະເພດໃບນ້ອຍ ແລະ ເງິນເສື່ອມຄຸນນະພາບ ສະກຸນເງິນຕາຕ່າງປະເທດ.

ມາດຕາ 2 ໃຫ້ທະນາຄານທຸລະກິດ ໃຊ້ດຸນພິນິດຂອງຕົນ ໃນການຮັບເງິນສົດປະເພດໃບນ້ອຍ ແລະ ເງິນເສື່ອມຄຸນນະພາບ ສະກຸນເງິນຕາຕ່າງປະເທດ ຕໍ່ກັບລູກຄ້າຂອງຕົນ.

ມາດຕາ 3 ຜົນສັກສິດ

ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນແຈ້ງການສະບັບເລກທີ 450/ທຫລ, ລົງວັນທີ 05 ຕຸລາ 2018.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

ສອນໄຊ ສິດພະໄຊ